ບົດຂ່າວ

# ພິທີເປີດໂຕ ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາຂອງ UNDP

## *ພາຫະນະຂອງ UNDP ເພື່ອການຕິດຕາມທີ່ວ່ອງໄວຕໍ່ການແກ້ໄຂບັນຫາຂອງການພັດທະນາ ເກັບກ່ຽວຜູ້ຊ່ຽວຊານຈາກທ້ອງຖິ່ນ, ລະບຸນະວັດຕະກໍາລະດັບຮາກຖານ ແລະຊຸກຍູ້ເຂົ້າສູ່ເຄືອຂ່າຍທົ່ວໂລກ*

**ນະຄອນຫຼວງວຽງຈັນ, 19 ກັນຍາ 2019 -** ໃນໂລກທີ່ປ່ຽນແປງຢ່າງວ່ອງໄວ, ການປ່ຽນແປງດິນຟ້າອາກາດແລະຄວາມທ້າທາຍໃນການພັດທະນາແມ່ນຮຽກຮ້ອງໃຫ້ຄໍານຶງເຖິງວິທີການຂອງພວກເຮົາໃນການທີ່ຈະຫາທາງອອກທີ່ສອດຄ່ອງກັບຄວາມຕ້ອງການຂອງສັງຄົມສະໄໝໃໝ່ແລະສ້າງອະນາຄົດທີ່ຍືນຍົງສໍາລັບທຸກຄົນ. ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໃນ ສປປ ລາວ ໃຫ້ຄວາມສໍາຄັນຕໍ່ກັບຄວາມຕ້ອງການນີ້ໂດຍການເປີດໂຕ ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາ (Accelerator Lab) ກັບເຄືອຂ່າຍທົ່ວໂລກ ເຊິ່ງເຄືອຂ່າຍດັ່ງກ່າວປະກອບມີ 60 ຫ້ອງຄົ້ນຄວ້າທີ່ເຮັດວຽກໃນ 78 ປະເທດ

ຈາກປະເທດອັລເຈເຣຍ ຮອດປະເທດຊິມບັບເວ, UNDP ກໍາລັງປ່ຽນແປງວິທີການການດໍາເນີນງານຕໍ່ກັບຊີວິດທີ່ຍືນຍົງໃນຄວາມພາກພູມໃຈແລະຄວາມຈະເລີນຮຸ່ງເຮືອງສໍາລັບທຸກຄົນ. ພວກເຮົາເຫັນໄດ້ວ່າຄວາມວ່ອງໄວແລະຄວາມຊັບຊ້ອນຂອງບັນຫາທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມໃນປັດຈຸບັນແມ່ນແຕກຕ່າງຈາກຍຸກກ່ອນໜ້ານີ້, UNDP ຈິ່ງສ້າງວິທີທາງໃໝ່ໃນການເຮັດວຽກກ່ຽວກັບການພັດທະນາ ໂດຍການຊ່ວຍເຫຼືອຈາກຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາ. ໂດຍການຮ່ວມມືກັບປະເທດກາຕ້າແລະສະຫະພັນສາທາລະນະລັດເຢຍລະມັນ, ເຄືອຂ່າຍທົ່ວໂລກຂອງຫ້ອງຄົ້ນຄວ້າຈະເຮັດວຽກຮ່ວມກັບພັນທະມິດລະດັບສາກົນເພື່ອຄົ້ນຫາຍຸດທະສາດໃໝ່ຢ່າງສຸດຂີດ

ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາ ຈະຄົ້ນຄວ້າການແກ້ໄຂບັນຫາຈາກຮາກຖານ, ທົດສອບ ແລະຫາກພົບເຫັນວ່າມັນມີສັກກະຍະພາບພຽງພໍ ຈະຂະຫຍາຍມັນອອກເພື່ອແກ້ໄຂບັນຫາທ້າທາຍທີ່ສໍາຄັນ. ຕົວຢ່າງຂອງຄວາມທ້າທາຍທີ່ ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາຂອງ UNDP ຢາກມີສ່ວນຮ່ວມໃນການແກ້ໄຂໃນລາວແມ່ນ ວິກິດຂອງພລາສຕິກທົ່ວໂລກແລະການສ້າງອາຊີບໃຫ້ຊາວໜຸ່ມ

ໂດຍການເຮັດວຽກຮ່ວມກັບ ກະຊວງແຜນການແລະການລົງທຶນ ແລະ ກະຊວງການຕ່າງປະເທດ ເຊິ່ງແມ່ນ ຄູ່ຮ່ວມງານຫລັກແລະບັນດາກະຊວງທີ່ເຮັດວຽກກ່ຽວຂ້ອງກັບບັນຫາແລະຂໍ້ທ້າທາຍທີ່ຫ້ອງຄົ້ນຄວ້າຈະລົງເລິກສໍາຫລວດ. ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາຈະຮັບປະກັນວ່າການເຮັດວຽກຕ້ອງມີຄວາມຈະແຈ້ງ, ມີສວ່ນຮ່ວມແລະມີການປະກອບສ່ວນຈາກທຸກຝ່າຍ.

"UNDP ຮູ້ແຈ້ງວ່າການເຮັດວຽກແບບເກົ່າຍັງບໍ່ໄດ້ມີການຕອບສະຫນອງແບບທັນດ່ວນທີ່ອີງໃສ່ຄວາມກ່ຽວຂ້ອງກັນໂດຍອີງໃສ່ປັດໄຈທາງດ້ານສັງຄົມ,ສິ່ງແວດລ້ອມແລະເສດຖະກິດ. ຜ່ານການເຮັດວຽກຂອງຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາ, ພວກເຮົາຈະແກ້ໄຂບັນຫາທີ່ຮີບດ່ວນທີ່ສົ່ງຜົນກະທົບຕໍ່ປະຊາຊົນແລະການພັດທະນາຂອງເສດຖະກິດ. ພວກເຮົາຈະເຮັດວຽກເພື່ອເຊື່ອມໂຍງທາງອອກໃນການແກ້ໄຂບັນຫາທີ່ມີຢູ່ແລ້ວໃຫ້ເກີດປະໂຫຍດເພີ່ມອີກ." ກ່າວໂດຍ ທ່ານ ນາງ ຣິຄາດ້າ ຣິເກີ້, ຜູ້ຕາງຫນ້າອົງການ UNDP ປະຈ□າ ສປປລາວ.

"ເພື່ອທີ່ຈະເຂົ້າໃຈສາເຫດຕົ້ນຕໍຂອງບັນຫາ, ມັນສໍາຄັນຫຼາຍທີ່ພວກເຮົາຕ້ອງເຂົ້າໃຈລະບົບນິເວດແລະທໍາມະຊາດຂອງຄວາມທ້າທາຍໃນປັດຈຸບັນ. ພວກເຮົາຈໍາເປັນຕ້ອງວາງແຜນແລະສໍາຫຼວດຜູ້ທີ່ມີສ່ວນໄດ້ສ່ວນເສຍແລະສະໜັບສະໜູນການເຮັດວຽກຮ່ວມ

ກັນ. ຄວາມຄິດລິເລີ່ມນີ້ຈະຊ່ວຍໃຫ້ພວກເຮົາເຮັດວຽກກັບຄູ່ຮ່ວມງານທີ່ແຕກຕ່າງເພື່ອແກ້ໄຂບັນຫາການພັດທະນາ, ເພື່ອພັດທະນາຕົ້ນແບບສໍາລັບການທົດລອງ ແລະເພື່ອແບ່ງປັນປະສົບການຂອງພວກເຮົາຜ່ານເຄືອຂ່າຍການຮຽນຮູ້” ກ່າວໂດຍ ນາງ ມະນີເພັດ ເພັງສະຫວັດດີ, ຫົວໜ້າດ້ານການສໍາຫລວດ ຂອງ ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາຂອງ UNDP ໃນ ສປປ ລາວ.

ສໍາລັບຂໍ້ມູນເພີ່ມຕື່ມ ກະລຸນາຕິດຕໍ່
ສົມລິດ ຄູນປະເສີດ, ຜູ້ປະສານງານການສື່ສານ, ອົງການ UNDP ສປປ ລາວ
ອີເມລ: somlith.khounpaseuth@undp.org
ໂທລະສັບ: 021 267751
ມືຖື: 020 7771 1874

ຄາວີ ຫອມສົມບັດ, ຫົວໜ້າດ້ານການທົດລອງ, ຫ້ອງຄົ້ນຄວ້າເພື່ອເລັ່ງການພັດທະນາ, ສປປ ລາວ
ອີເມລ: khavi.homsombath@undp.org
ໂທລະສັບ: 021 267 794
ມືຖື: 020 5233 0288